# ເອກະສານປະກອບການຂໍອຸດໜີທາງວິຊາການ

ນຳສະເໜີໂດຍ: ຮສ ດຣ. ໄຫງວ ແກ້ວສະດາ
ຮອງ ຜອ.: Distance & E-learning Education Center, NUOL.
Tel.: 020 96565654
E-mail: ngouay.keosada@yahoo.com

# ເອກະສານປະກອບບົດສອນ

- ໝາຍເຖິງເອກະສານ ຫຼືອຸປະກອນຕ່າງໆທີ່ໃຊ້ປະກອບການສອນວິຊາໃດໜຶ່ງຕາມຫຼັກສູດມະຫາວິທະຍາໄລ ຫຼື ສະຖາບັນການສຶກສາຊັ້ນສູງທີ່ສະແດງໃຫ້ເຫັນເນື້ອໃນວິຊາ ແລະວິທີສິດສອນຢ່າງເປັນລະບົບ ເຊັ່ນ ແຜນການສອນ, ຫົວຂໍ້ຄາບັນລະຍາຍ, ລາຍຊື່ບົດບັນລະຍາຍ ຫຼືໜັງສືອ່ານປະກອບບົດຮຽນ.

# ເອກະສານບັນລະຍາຍບົດສອນ

- ໝາຍເຖິງເອກະສານ ຫຼື ອຸປະກອນສື່ຕ່າງໆ ທີ່ໃຊ້ສອນຫຼັກສູດໃດໜຶ່ງຕາມຫຼັກສູດມະຫາວິທະຍາໄລ ຫຼື ສະຖາບັນການສຶກສາຊັ້ນສູງທີ່ສະແດງໃຫ້ເຫັນເນື້ອໃນວິຊາ, ມີວິທີສິດສອນຢ່າງເປັນລະບົບ ແລະມີໂຄງສ້າງສົມບູນກ່ວາເອກະສານປະກອບການສອນ(ເຊັ່ນ: ການນໍາໃຊ້ UbD ແລະແຜນວາດຊ່ວຍຈື່-Mind Map) ຖ້າ ເປັນເອກະສານຕ້ອງພິມ ແລະຄັດຫຍິບເປັນຮູບເຫຼັ້ມ.

# ຕຳລາ

ໝາຍເຖິງເອກະສານທາງວິຊາການທີ່ຮຽບຮຽງຢ່າງເປັນລະບົບ ອາດຂຽນຂຶ້ນເພື່ອຕອບສະໜອງເນື້ອໃນທັງໝົດຂອງລາຍວິຊາ ຫຼື ສ່ວນໃດສ່ວນໜຶ່ງຂອງລາຍວິຊາ ຫຼື ຫຼັກສູດໃດກໍ່ໄດ້ໂດຍມີການວິເຄາະ ແລະສັງເຄາະຄວາມຮູ້ທີ່ກ່ຽວຂ້ອງ ສະທ້ອນໃຫ້ເຫັນຄວາມສາມາດໃນການຖ່າຍທອດລາຍວິຊາໃນລະດັບການສຶກສາຊັ້ນສູງໃນບາງກໍລະນີ ຜູ້ຂຽນອາດສະເໜີຕຳລາໃນຮູບແບບອື່ນໆເຊັ່ນ: ຊີດີຣອມ, ເອກະສານ ຫຼື ສື່ອື່ນໆ ປະກອບເຂົ້າກັນຕາມຄວາມເໝາະສົມ.

# ໜັງສືວາລະສານ ຫຼືບົດຄວາມ

- ໝາຍເຖິງເອກະສານທາງວິຊາການທີ່ຂຽນຂຶ້ນເຜີຍແຜ່ຄວາມຮູ້ ໄປສູ່ວົງການວິຊາການ ຫຼື ຜູ້ອ່ານທົ່ວໄປ ໂດຍບໍ່ຈຳເປັນໄປຕາມຂໍ້ກຳນົດຂອງໂຄງການຫຼັກສູດ ຫຼື ຕ້ອງນຳມາປະກອບການຮຽນການສອນວິຊາໃດໜຶ່ງຕ້ອງເປັນເອກະສານທີ່ຮຽບຮຽງຂຶ້ນຢ່າງມີມາດຕະຖານທາງວິຊາການທີ່ໝັ້ນຄົງ, ໃຫ້ທັດສະນະຂອງຜູ້ຂຽນທີ່ສົ່ງເສີມທາງດ້ານປັນຍາແນວຄິດ ແລະສ້າງຄວາມເຂັ້ມແຂງທາງດ້ານວິຊາການໃຫ້ແກ່ສາຂາວິຊານັ້ນໆ ຫຼື ສາຂາວິຊາທີ່ກ່ຽວພັນ. ໃນບາງກໍລະນີຜູ້ຂຽນອາດຂຽນໃນຮູບແບບອື່ນໆເຊັ່ນ: ຊີດີຣອມ, ເອກະສານ ຫຼື ສື່ອື່ນໆປະກອບເຂົ້າກັນຕາມຄວາມເໝາະສົມ.

# ບົດຄົ້ນຄວ້າວິໄຈ

- ໝາຍເຖິງຜົນງານການຄົ້ນຄ້ວາຢ່າງເປັນລະບົບ ແລະມີຈຸດປະສົງຢ່າງຈະແຈ້ງ ເພື່ອໃຫ້ໄດ້ມາທາງດ້ານຂໍ້ມູນ, ຫຼັກການ ຫຼື ຂໍ້ສະຫຼຸບຊຶ່ງຈໍານໍາໄປສູ່ຄວາມກ້າວໜ້າທາງວິຊາການ ຫຼື ອໍານວຍຄວາມສະດວກຕໍ່ວິຊາການນັ້ນເພື່ອນໍາໄປໃຊ້ຕົວຈິງມີລັກສະນະເປັນເອກະສາທີ່ມີລະບຽບວິທີວິໄຈທີ່ເປັນລະບົບ ແລະເໝາະສົມກັບທໍາມະຊາດຄວາມເປັນຈິງຂອງວິຊາ.

# ການແປເອກະສານ

- ເປັນການແປຈາກໜັງສື ຫຼື ຕາລາສະບັບຕົ້ນເຊັ່ນ: ວັນນະກຳ ຫຼືບົດຂຽນ ໃນນັ້ນມີທັງບົດຄົ້ນຄວ້າວິໄຈ(literatures), ປັດຊະຍາ, ປະຫວັດສາດ ຕະຫຼອດເຖິງສາຂາວິຊາອື່ນໆ ທີ່ມີຄວາມສຳຄັນ ແລະມີຄຸນຄ່າໃນສາຂາວິຊານັ້ນ. ເມື່ອໄດ້ນຳມາແປຈະເປັນການເສີມສ້າງຄວາມກ້າວໜ້າທາງວິຊາການທີ່ເຫັນໄດ້ຈະແຈ້ງ ເປັນການແປພາສາຕ່າງປະເທດເປັນພາສາລາວ ຫຼື ພາສາລາວເປັນພາສາຕ່າງປະເທດ ຫຼື ຈາກພາສາຕ່າງປະເທດໃດໜຶ່ງ ເປັນພາສາຕ່າງປະເທດອີກພາສາໜຶ່ງ.

# ບົດຄວາມທາງວິຊາການ

- ໝາຍເຖິງບົດທີ່ຂຽນຂຶ້ນຊຶ່ງມີການການົດບັນຫາຈະແຈ້ງມີການວິເຄາະບັນຫາດັ່ງກ່າວຕາມຫຼັກວິຊາການ ແລະມີການສະຫຼຸບບັນຫາອາດເປັນການນຳຄວາມຄິດມາຈາກແຫຼ່ງຕ່າງໆມາສັງເຄາະໂດຍຜູ້ຂຽນສາມາດໃຫ້ທັດສະນະທາງວິຊາການຂອງຕົນເອງໄດ້ຢ່າງຈະແຈ້ງ.

# ຜົນງານວິຊາການໃນລັກສະນະອື່ນໆ

- ໝາຍເຖິງຜົນງານຢ່າງອື່ນໆ ທີ່ບໍ່ແມ່ນເອກະສານທີ່ປະກອບການສອນ, ເອກະສານບັນລະຍາຍ, ບົດຄວາມທາງວິຊາການ, ຕໍາລາ ຫຼື ບົດວິໄຈ ໝາຍເຖິງສິ່ງປະດິດ ຫຼື ງານສ້າງສັນອື່ນໆເຊັ່ນ: ຜົນງານການສ້າງແນວພັນໃໝ່, ຜົນງານສິນລະປະ, ຜົນງານທາງວິຊາການດັ່ງກ່າວອາດເປັນບັນທຶກວິດີໂອ ຫຼື ສື່ອື່ນໆກໍ່ໄດ້ ຊຶ່ງໄດ້ຮັບການຮັບຮອງຈາກອົງການວິຊາສະເພາະທີ່ກ່ຽວຂ້ອງ.

# ການແຕ່ງ-ການຂຽນ

ໝາຍເຖິງການຂຽນຕຳລາ ຫຼື ໜັງສື ເພື່ອຮັບໃຊ້ວົງການວິຊາການ ຫຼື ສັງຄົມທົ່ວໄປ.

# ເອກະສານປະກອບການສອນ

ຕ້ອງໄດ້ຮັບການຕີພິມ ຫຼື ຖ່າຍອັດສຳເນົາເປັນເຫຼັ້ມ

# ຕຳລາ

ຕ້ອງໄດ້ຮັບການພິມເປັນຮູບເຫຼັ້ມ ຈາກໂຮງພິມ ຫຼື ສຳເນົາພິມ ຫຼື ຖ່າຍສຳເນົາເປັນເຫຼັ້ມ, ເຮັດໃນຮູບທີ່ເໝາະສົມ ຊຶ່ງໄດ້ນຳໃຊ້ເຂົ້າໃນການຮຽນ-ການສອນ ແລະໄດ້ຮັບການເຜີຍແຜ່ຢ່າງໜ້ອຍ 1 ສົກຮຽນ ກ່ອນນຳສະເໜີຂໍຕຳແໜ່ງທາງວິຊາການ.

# ໜັງສືວາລະສານ ຫຼືບົດຄວາມ

ຕ້ອງໄດ້ຮັບການພິມເປັນຮູບເຫຼັ້ມຈາກໂຮງພິມ ຫຼື ສຳນັກພິມ ແລະໄດ້ຮັບການເຜີຍແຜ່ມາແລ້ວຢ່າງໜ້ອຍ 1 ສົກຮຽນ ກ່ອນນຳສະເໜີຂໍຕຳແໜ່ງວິຊາການ

# ບົດວິໄຈ

ເຜີຍແຜ່ໃນລັກສະນະໃດໜຶ່ງ:

1. ຕີພິມເຜີຍແຜ່ໃນຮູບແບບຂອງບົດຄວາມວິໄຈໃນວາລະສານທາງວິຊາການ.

2. ຕີພິມໜັງສືຮ່ວມບົດວິໄຈໃນລະດັບນາໆຊາດເຊິ່ງເປັນງານທີ່ໄດ້ຮັບເຊີນໃຫ້ຂຽນ ຫຼື ກອງບັນນາທິການກວດສອບຄຸນະພາບແລ້ວ.

3. ສະເໜີໃນຮູບແບບເອກະສານທາງວິຊາການຕໍ່ທີ່ປະຊຸມທາງວິຊາການເຊິ່ງເປັນຍອມຮັບຂອງນັກວິຊາການໂດຍມີການນຳໄປຮ່ວມກັບເຫຼັ້ມອື່ນໆເຜີຍແຜ່ໃນຮູບຂອງໜັງສື, ຮ່ວມເອກະສານວິຊາການຈາກການປະຊຸມໃນຄັ້ງນີ້.

4. ໃນກໍລະນີທີ່ບົດວິໄຈສະບັບສົມບູນ ມີຄວາມຍາວເປັນເຫຼັ້ມໜັງສື ຈະຕ້ອງຜ່ານການປະເມີນຄຸນະພາບຈາກຜູ້ຊົງຄຸນວຸດທິກ່ອນນຳເຜີຍແຜ່ສູ່ ສະຖາບັນການສຶກສາທາງວິຊາການ.

# ຕຳລາ

ເປັນຕຳລາທີ່ມີເນື້ອໃນທາງວິຊາການຖືກຕ້ອງສົມບູນ ແລະທັນສະໄໝ ມີແນວຄິດ ແລະນຳສະເໜີທີ່ຈະແຈ້ງເປັນປະໂຫຍດຕໍ່ການຮຽນການສອນໃນລະດັບການສຶກສາຊັ້ນສູງ.

ໃຊ້ຫຼັກການດຽວກັນກັບລະດັບດີ ໂດຍມີຂໍ້ກຳນົດດ້ານຄຸນນະພາບເພີ່ມເຕີມດັ່ງນີ້:

1. ມີການສັງເຄາະ ແລະສະເໜີຄວາມຮູ້ ຫຼື ມີວິທີການທີ່ທັນຕໍ່ຄວາມກ້າວໜ້າທາງວິຊາການ.

2. ມີແນວຄິດລິເລີ່ມ ແລະປະສົບການ ຫຼື ບົດວິໄຈໄດ້ມີການສະແດງໃຫ້ເຫັນເຖິງຄວາມເປັນປະໂຫຍດຕໍ່ການຮຽນ-ການສອນ.

3. ສາມາດນຳໄປເປັນບ່ອນອ້າງອີງ ຫຼື ນຳໄປປະຕິບັດໄດ້.

ໃຊ້ໃນຫຼັກການດຽວກັນລະດັບດີຫຼາຍໂດຍມີຂໍ້ກຳນົດດ້ານຄຸນນະພາບເພີ່ມເຕີມດັ່ງນີ້:

1. ມີລັກສະນະເປັນງານບຸກເບີກທາງວິຊາການໃນເລື້ອງໃດໜຶ່ງ.

2. ມີການກະຕຸ້ນໃຫ້ເກີດຄວາມຄິດ ແລະການຄົ້ນຄ້ວາຢ່າງຕໍ່ເນື່ອງ.

3. ເປັນໜ້າເຊື່ອຖື ແລະຍອມຮັບໃນວົງການວິຊາການ ຫຼື ວິຊາຊີບທີ່ກ່ຽວຂ້ອງໃນລະດັບຊາດ ຫຼື ນາໆຊາດ.

# ໜັງສືວາລະສານ ຫຼືບົດຄວາມ

ເປັນໜັງສືທີ່ມີເນື້ອໃນທາງວິຊາການຖືກຕ້ອງສົມບູນ ແລະທັນສະໄໝ ມີແນວຄວາມຄິດ ແລະນຳສະເໜີທີ່ຈະແຈ້ງເປັນປະໂຫຍດຕໍ່ວົງການວິຊາການ.

ໃຊ້ຫຼັກການດຽວກັນກັບລະດັບດີ ໂດຍມີຂໍ້ກຳນົດດ້ານຄຸນນະພາບເພີ່ມເຕີມດັ່ງນີ້:

1. ມີການສັງເຄາະ ແລະສະເໜີຄວາມຮູ້ ຫຼື ມີວິທີການທີ່ທັນຕໍ່ຄວາມກ້າວໜ້າທາງວິຊາການ.

2. ມີຄວາມຄິດລິເລີ່ມ ແລະປະສົບການ ຫຼື ບົດວິໄຈໄດ້ມີການສະແດງໃຫ້ເຫັນເຖິງຄວາມເປັນປະໂຫຍດຕໍ່ການຮຽນການສອນ.

3. ສາມາດນຳໄປໃຊ້ເປັນບ່ອນອ້າງອີງ ຫຼື ນຳໄປປະຕິບັດຕົວຈິງ.

ໃຊ້ຫຼັກການດຽວກັນກັບລະດັບດີຫຼາຍໂດຍມີຂໍ້ກຳນົດດ້ານຄຸນນະພາບເພີ່ມເຕີມດັ່ງນີ້:

1. ມີລັກນະເປັນງານບຸກບືນທາງວິຊາການໃນເລື່ອງໃດເລື່ອງໜຶ່ງ.

2. ມີການກະຕຸ້ນໃຫ້ເກີດມີແນວຄວາມຄິດ ແລະການຄົ້ນຄ້ວາຢ່າງຕໍ່ເນື່ອງ.

3. ເປັນໜ້າເຊື່ອຖື ແລະຍອມຮັບໃນວົງການວິຊາການ ຫຼື ວິຊາຊີບທີ່ກ່ຽວຂ້ອງໃນລະດັບຊາດ ຫຼື ນາໆຊາດ.

# ບົດວິໄຈ

ເປັນບົດວິໄຈທີ່ມີຄວາມຖືກຕ້ອງເໝາະສົມ ກັບລະບຽບວິທີວິໄຈການວິເຄາະຜົນ ແລະການນຳສະເໜີຜົນທີສະແດງໃຫ້ເຫັນເຖິງຄວາມກ້າວໜ້າທາງວິຊາການ ຫຼື ນຳໄປໃຊ້ໃນຕົວຈິງໄດ້ ແລະໄດ້ຮັບການພິມເຜີຍແຜ່.

ໃຊ້ຫຼັກການດຽວກັນກັບລະດັບດີ ໂດຍມີຂໍ້ກຳນົດດ້ານຄຸນນະພາບເພີ້ມເຕີມດັ່ງນີ້:

1. ເປັນທີ່ສະແດງເຖິງຄວາມຮູ້ໃໝ່ທີ່ເລິກເຊິ່ງກ່ວາບົດເກົ່າທີ່ເຄີຍມີຜູ້ຄົ້ນຄ້ວາມາກ່ອນແລ້ວ.

2. ເປັນປະໂຫຍດທາງດ້ານວິຊາການຢ່າງກ້ວາງຂວາງ ຫຼື ສາມາດນຳໄປປະຕິບັດຕົວຈິງໄດ້ຢ່າງຫຼວງຫຼາຍ.

ໃຊ້ຫຼັກການດຽວກັນກັບລະດັບດີຫຼາຍ ໂດຍມີຂໍ້ກຳນົດດ້ານຄຸນນະພາບເພີ່ມເຕີມດັ່ງນີ້:

1. ເປັນງານບຸກເບີກທີ່ມີຄຸນຄ່າຢ່າງຫຼວງຫຼາຍທຳໃຫ້ເກີດມີຄວາມກ້າວໜ້າທາງດ້ານວິຊາການໃນລະດັບສູງ.

2. ເປັນທີ່ຍອມຮັບໃນວົງການວິຊາການ ຫຼື ວິຊາຊີບທີ່ກ່ຽວຂ້ອງໃນລະດບຊາດ ຫຼື ນາໆຊາດ.

# ການແປເອກະສານ

ເປັນການແປທີ່ສະແດງໃຫ້ເຫັນເຖິງຄວາມເຂົ້າໃຈໃນຕົວບົດ ແບບແຜນແນວຄວາມຄິດ ແລະບົ່ງບອກເຖິງຄວາມສາມາດໃນການສື່ ຄວາມໝາຍໄດ້ເປັນຢ່າງດີມີຄວາມໝາຍໃນການສຶກສາວິເຄາະໃນ ລັກສະນະທີ່ທຽບໄດ້ກັບບົດວິໄຈ, ມີການອະທິບາຍໃນຮູບແບບວິຊາ ການອັນເໝາະສົມໃນລະດັບຈຸລະພາກ ແລະມະຫາພາກ.

ເປັນການແປທີ່ສະແດງໃຫ້ເຫັນເຖິງຄວາມເຂົ້າໃຈອັນເລິກເຊິ່ງ ໃນຕົວບົດ ແບບແຜນທາງຄວາມຄິດ ແລະບົ່ງບອກເຖິງຄວາມສາມາດ ໃນການສື່ຄວາມໝາຍໃນລະດັບສູງ ມີການສຶກສາວິເຄາະ ແລະຕີ ຄວາມໝາຍຂອງບົດຢ່າງລະອຽດເລິກເຊິ່ງໃນລັກນະທີ່ທຽບໄດ້ກັບບົດ ວິໄຈ, ມີການອະທິບາຍໃນຮູບແບບຂອງວິຊາການໃນລັກນະຕ່າງໆ ອັນເໝາະສົມໃນລະດັບຈຸລະພາກ ແລະມະຫາພາກ ລວມທັງໃຫ້ຂໍ້ ສະຫຼຸບໃນດ້ານຂອງວິທີການແປ ແລະທິດສະດີການແປ.

ໃຊ້ຫຼັກການດຸຍອກັນກັບລະດັບດີ ໂດຍມີຂໍ້ກຳນົດດ້ານຄຸນນະພາບເພີ່ມເຕີມດັ່ງນີ້:

1. ເປັນການແປມາຈາກຕົ້ນສະບັບ ທີ່ມີຄວາມສຳຄັນ ໃນລະດັບທີ່ທຳໃຫ້ເກີດມີການປ່ຽນແປງທາງດ້ານວິຊາການ.

2. ເປັນການແປທີ່ຢູ່ໃນລະດັບຄວາມສາມາດຖືເປັນຕົ້ນສະບັບໄດ້.

3. ມີການໃຫ້ຂໍ້ສະຫຼູບໃນທາງດ້ານຂອງວິທີການແປ ແລະທິດສະດີການແປ ທີ່ມີລັກສະນະບຸກເບີກທາງວິຊາການ.

ເປັນຜົນງານໃໝ່ ຫຼື ເປັນການສິ່ງທີ່ມີຢູ່ແລ້ວມານຳໃຊ້ດ້ວຍວິທີການໃໝ່ໆ ແລະຜົນງານນັ້ນທຳໃຫ້ເກີດຜົນປະໂຫຍດໃນດ້ານໃດດ້ານໜຶ່ງ.

ໃຊ້ຫຼັກການດຽວກັນກັບລະດັບດີ ໂດຍມີຂໍ້ກຳນົດດ້ານຄຸນນະພາບເພີ່ມເຕີມດັ່ງນີ້:

1. ໄດ້ຮັບຮອງໂດຍອົງການວິຊາການ ຫຼື ໜ່ວຍງານອື່ນໆທີ່ກ່ຽວຂ້ອງໃນສາຂາທີ່ສະເໜີ ຫຼື ໄດ້ຮັບການເຜີຍແຜ່ໃນວົງການວິຊາການຢ່າງກ້ວາງຂວາງ.

2. ເປັນຜົນງານສ້າງສັນ ແລະເປັນທີ່ຍອມຮັບຂອງຜູ້ຊຽວຊານໃນສາຂາວິຊານັ້ນໆ.

ໃຊ້ຫຼັກການດຽວກັນກັບລະດັບດີຫຼາຍ ແຕ່ຕ້ອງເປັນທີ່ຍອມຮັບໂດຍທົ່ວໃນວິຊາການ ຫຼື ອົງການວິຊາຊີບອື່ນໆໃນລະດັບຊາດ ຫຼື ນາໆຊາດ.